ສຳນັກງານໃຫຍ່

ເລກທີ: 13 /ທຄຕລ
ນະຄອນຫຼວງວຽງຈັນ, ວັນທີ: 05 MAY 2022

# ບົດບັນທຶກ
## ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2021.
## ວັນທີ 29/04/2022

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 (ຕໍ່ໄປນີ້ຮຽກວ່າ: "ກອງປະຊຸມ") ຂຶ້ນໃນເວລາ 14:05 ໂມງ ຂອງວັນທີ 29 ເມສາ 2022 ທີ່ໂຮງແຮມລາວພລາຊາ ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ຄຳສຸກ ສູນດາລາ, ຮອງປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ 25 ທ່ານ, ຜູ້ມອບສິດຈຳນວນ 147 ທ່ານ ຊຶ່ງລວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 158.149.080 ຮຸ້ນ, ນັບທັງ 1.005.209 ຮຸ້ນ ທີ່ຖືກມອບສິດ, ບັນລຸອັດຕາສ່ວນ 76,13% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ 49.574.220 ຮຸ້ນ ເທົ່າກັບ 23,86 % ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

ຄະນະປະທານ ແລະ ສະມາຊິກສະພາບໍລິຫານທີ່ເຂົ້າຮ່ວມກອງປະຊຸມ ປະກອບມີ:

1. ທ່ານ ຄຳສຸກ ສູນດາລາ, ສະມາຊິກສະພາບໍລິຫານອິດສະຫຼະ, ຮອງປະທານສະພາບໍລິຫານ ເຮັດໜ້າທີ່ເປັນປະທານກອງປະຊຸມ;
2. ທ່ານ ຄຳພຸດ ສິທິລາດ, ຜູ້ອຳນວຍການ ທຄຕລ, ສະມາຊິກສະພາບໍລິຫານ;
3. ທ່ານ ປະສົມເພັດ ຄຳຕັນ, ຕາງໜ້າກະຊວງການເງິນ, ສະມາຊິກສະພາບໍລິຫານ;
4. ທ່ານ ວຽງສຸກ ຈຸນທະວົງ, ຮອງຜູ້ອຳນວຍການ, ສະມາຊິກສະພາບໍລິຫານ;
5. ທ່ານ ຣສຈ. ທອງເພັດ ຈັນທະນິວົງ, ສະມາຊິກສະພາບໍລິຫານອິດສະຫຼະ;
6. ທ່ານ ສອນໄຊ ສີລາເພັດ, ສະມາຊິກສະພາບໍລິຫານອິດສະຫຼະ;
7. ທ່ານນາງ ລັດດາວັນ ຊົງວິໄລ, ສະມາຊິກສະພາບໍລິຫານອິດສະຫຼະ.
8. ທ່ານ ສະເຕຟານ ອຽກແບັງ, ຕາງໜ້າ COFIBRED ຄູ່ຮ່ວມຍຸດທະສາດ;

ປະທານກອງປະຊຸມ ໄດ້ແນະນຳລະບຽບການດຳເນີນກອງປະຊຸມ ແລະ ວິທີລົງຄະແນນສຽງ. ຈາກນັ້ນກອງປະຊຸມຈຶ່ງໄດ້ດຳເນີນແຕ່ລະວາລະຕາມລຳດັບ.

ກອງປະຊຸມ ໄດ້ພິຈາລະນາ, ມີຄຳເຫັນ ແລະ ມີການຕົກລົງໃນແຕ່ລະວາລະ ດັ່ງນີ້:

**ວາລະທີ 1: ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນສະໄໝວິສາມັນປະຈຳປີ 2021.**

ທ່ານ ຄຳພຸດ ສິດທິລາດ, ຜູ້ອຳນວຍການ ທຄຕລ ໄດ້ນຳສະເໜີເນື້ອໃນບົດບັນທຶກກອງປະຊຸມຜູ້ຖືຮຸ້ນສະໄໝວິສາມັນ ປະຈຳປີ 2021 ຈັດຂຶ້ນໃນວັນທີ 29 ຕຸລາ 2021, ເຊິ່ງບົດບັນທຶກດັ່ງກ່າວ ໄດ້ຖືກເປີດເຜີຍຢ່າງສອດຄ່ອງກັບກົດລະບຽບທີ່ກ່ຽວຂ້ອງແລ້ວ;

ຈາກນັ້ນ ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ແຕ່ບໍ່ມີຄຳຖາມ. ປະທານກອງປະຊຸມຈຶ່ງສະເໜີໃຫ້ລົງຄະແນນສຽງ.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງ ເປັນເອກະພາບຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 158.149.080 ສຽງ, ເທົ່າກັບ 100 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 2: ຮັບຮອງເອົາບົດລາຍງານການດຳເນີນທຸລະກິດຂອງ ທຄຕລ ໃນປີ 2021 ແລະ ເອກະສານລາຍງານການເງິນປະຈຳປີ 2021 ທີ່ໄດ້ຮັບການກວດສອບຈາກ ບໍລິສັດ PWC, ການແບ່ງປັນກຳໄລຫຼັງອາກອນເຂົ້າຄັງຕ່າງໆຕາມລະບຽບການ ແລະ ຕົກລົງບໍ່ຈ່າຍເງິນປັນຜົນປະຈຳປີ 2021:**

ທ່ານ ຄຳພຸດ ສິດທິລາດ, ຜູ້ອຳນວຍການ ທຄຕລ ໄດ້ນຳສະເໜີຕໍ່ກອງປະຊຸມຮັບຊາບ ແລະ ພິຈາລະນາ:

❖ ການເຄື່ອນໄຫວຂອງ ທຄຕລ ທີ່ພົ້ນເດັ່ນນັບຈາກກອງປະຊຸມຜູ້ຖືຮຸ້ນສະໄໝວິສາມັນປະຈຳປີ 2021 ຈົນເຖິງ ສິ້ນສຸດປີ 2021:

- ດ້ານກົງຈັກການຈັດຕັ້ງ ກອງປະຊຸມຜູ້ຖືຮຸ້ນຄັ້ງຜ່ານມາໄດ້ຮັບຮອງເອົາສະພາບໍລິຫານຊຸດໃໝ່ ປະກອບດ້ວຍສະມາຊິກທັງໝົດ 9 ທ່ານ, ໃນນັ້ນມີສະມາຊິກອິດສະຫຼະ 4 ທ່ານ (ເພດຍິງ 1 ທ່ານ), ສະມາຊິກທີ່ບໍ່ແມ່ນຜູ້ບໍລິຫານ 3 ທ່ານ ແລະ ອີກ 2 ທ່ານເປັນສະມາຊິກທີ່ມາຈາກຜູ້ບໍລິຫານ ທຄຕລ. ໂຄງປະກອບຂອງສະພາບໍລິຫານຊຸດໃໝ່ ສອດຄ່ອງກັບນິຕິກຳທີ່ຜູ້ຄຸ້ມຄອງວາງອອກ.
- ນອກຈາກນັ້ນ ກອງປະຊຸມຜູ້ຖືຮຸ້ນຄັ້ງຜ່ານມາ ຍັງໄດ້ຮັບຮອງເອົາການດັດແກ້ແຜນການປະຈຳປີ 2021 ເຊິ່ງນອນໃນແຜນດັດແກ້ດັ່ງກ່າວ ຄະນະຜູ້ບໍລິຫານ ທຄຕລ ໄດ້ດຳເນີນມາດຕະການຊົ່ວຄາວເພື່ອແກ້ໄຂຄວາມຫຍຸ້ງຍາກທາງດ້ານທຸລະກິດຄື:
    1. ໄດ້ຄົ້ນຄວ້ານຳສະເໜີການປັບປຸງໂຄງສ້າງດ້ານກົງຈັກການຈັດຕັ້ງໃຫ້ມີຄວາມກະທັດຮັດຂຶ້ນກວ່າເກົ່າ ເພື່ອຫຼຸດຜ່ອນດ້ານຕົ້ນທຶນບໍລິຫານ ເຊິ່ງໄດ້ຜ່ານການຮັບຮອງຈາກສະພາບໍລິຫານ ແລະ ຂັ້ນເທິງທີ່ກ່ຽວຂ້ອງ ພ້ອມທັງໄດ້ຈັດຕັ້ງປະຕິບັດແລ້ວໃນໄຕຣມາດ 1 ປີ 2022;
    2. ຫຼຸດຜ່ອນລາຍຈ່າຍບໍລິຫານ ເຊັ່ນ: ຢຸດຮັບພະນັກງານໃໝ່, ໂຈະການຈັດຊື້ທີ່ມີມູນຄ່າສູງ ແລະ ລາຍຈ່າຍບາງດ້ານ ທີ່ບໍ່ມີຄວາມຈຳເປັນ;
    3. ໂຈະການຂະຫຍາຍສາຂາ ແລະ ໜ່ວຍບໍລິການ, ພ້ອມທັງໄດ້ປິດບາງໜ່ວຍບໍລິການທີ່ບໍ່ມີປະສິດຕິຜົນ;
- ພ້ອມກັນນັ້ນ ກໍ່ໄດ້ຄົ້ນຄວ້າສ້າງແຜນ ທຸລະກິດປະຈຳປີ 2022 ແລະ ກຳນົດຕົວຊີ້ວັດ (KPI) ຂອງສາຂາ ທົ່ວລະບົບ ຢ່າງຊັດເຈນເພື່ອຫັນໄປສູ່ການໄລ່ລຽງບໍລິຫານກຸ້ມຕົນເອງໃນອານາຄົດເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ສາຂາ ທຄຕລ ທົ່ວລະບົບ.

❖ ຜົນການດຳເນີນທຸລະກິດ ປະຈຳປີ 2021 ທີ່ໄດ້ຮັບການກວດສອບ:

- ຍອດຊັບສິນ/ໜີ້ສິນ: 68.236. 991 ລ້ານກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 109,53%
- ຍອດສິນເຊື່ອທັງໝົດ: 30.080.974 ລ້ານກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 122,15%
- ຍອດເງິນຝາກທັງໝົດ: 61.802.739 ລ້ານກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 110,36%
- ກຳໄລກ່ອນອາກອນ: 12.585 ລ້ານກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 48,40%
- ກຳໄລຫຼັງອາກອນ: 11.410 ລ້ານກີບ, ທຽບໃສ່ແຜນການປີ 2021 ປະຕິບັດໄດ້ 58,86 %

❖ ເນື່ອງຈາກການດຳເນີນທຸລະກິດຂອງ ທຄຕລ ໃນປີ 2021 ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ເຮັດໃຫ້ຜົນປະກອບການຂອງ ທຄຕລ ມີກຳໄລຫຼຸດລົງ. ສະນັ້ນ, ສຳລັບປີ 2021 ສະພາບໍລິຫານ ຈຶ່ງໄດ້

ຕົກລົງບໍ່ຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນ ແລະ ສະເໜີແບ່ງກຳໄລຫຼັງຫັກອາກອນທີ່ຍັງເຫຼືອເຂົ້າຄັງຕ່າງໆຕາມລະບຽບການ:

- ແບ່ງຄັງສະສົມຕາມລະບຽບການ: 10%
- ແບ່ງຄັງຂະຫຍາຍທຸລະກິດ: 90%

ຈາກນັ້ນ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງມີຄຳເຫັນດັ່ງນີ້:

➢ **ທ່ານ Sovanrith Im** ຕາງໜ້າທະນາຄານແຄນນາເດຍ ລາວຈຳກັດ ໄດ້ມີຄຳຖາມວ່າ: ❶ ທຄຕລ ມີຕົວເລກເງິນກູ້ເພີ່ມຂຶ້ນ ຍ້ອນຫຍັງຈຶ່ງມີລາຍຮັບຫຼຸດລົງ, ❷ ລາຍຮັບຈາກການຊື້ຂາຍເງິນຕາຫຼຸດລົງຍ້ອນຫຍັງ, ❸ ຕົວເລກລາຍຈ່າຍຄັງແຮສິນເຊື່ອເພີ່ມຂຶ້ນຫຼາຍ.

- **ທ່ານ ຄຳພຸດ ສິດທິລາດ** ໄດ້ຊີ້ແຈງວ່າ: ❶ ໃນປີ 2021 ສະພາບເສດຖະກິດໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ 19 ທີ່ເກີດຂຶ້ນເລີ່ມແຕ່ປີ 2019, ທະນາຄານທຸລະກິດແຫ່ງຕ່າງໆລ້ວນແຕ່ໄດ້ຮັບຜົນກະທົບ, ທຄຕລ ໄດ້ມີການປັບໂຄງສ້າງຂອງລູກຄ້າເງິນກູ້ຈຳນວນໜຶ່ງ ຈຶ່ງບໍ່ໄດ້ຄິດໄລ່ດອກເບ້ຍຄ້າງຮັບ ເຂົ້າໃນລາຍຮັບ ເພາະເຖິງວ່າຄິດໄລ່ກໍ່ເກັບບໍ່ໄດ້ ຈຶ່ງເປັນສາເຫດເຮັດໃຫ້ລາຍຮັບຫຼຸດລົງ. ❷ ລາຍຮັບຊື້ຂາຍເງິນຕາຫຼຸດລົງ ກໍ່ແມ່ນໜຶ່ງໃນຜົນກະທົບຂອງການແຜ່ລະບາດຂອງພະຍາດໂຄວິດ 19 ບໍ່ມີນັກທ່ອງທ່ຽວເຂົ້າມາ, ທະນາຄານບໍ່ສາມາດເກັບຊື້ເງິນຕາໄດ້ ເຮັດລາຍຮັບຫຼຸດລົງ. ❸ ຄັງແຮເງິນກູ້ເພີ່ມຂຶ້ນ ເນື່ອງຈາກການປັບໂຄງສ້າງເງິນກູ້ ຕາມລະບຽບ ທຫລ ກຳນົດການປັບປຸງບໍ່ເກີນ 3 ຄັ້ງ, ຕົວເລກ NPL ເພີ່ມຂຶ້ນ ເຮັດໃຫ້ຕົວເລກຄັງແຮກໍ່ເພີ່ມຂຶ້ນ.

ຫຼັງຈາກນັ້ນ ປະທານກອງປະຊຸມ ໄດ້ສະເໜີໃຫ້ລົງຄະແນນສຽງ.

ກອງປະຊຸມ ໄດ້ມີມະຕິຮັບຮອງ ບົດລາຍງານການດຳເນີນທຸລະກິດຂອງ ທຄຕລ ໃນປີ 2021 ແລະ ເອກະສານລາຍງານການເງິນປະຈຳປີ 2021 ທີ່ໄດ້ຮັບການກວດສອບຈາກ ບໍລິສັດ PWC, ການແບ່ງປັນກຳໄລຫຼັງອາກອນເຂົ້າຄັງຕ່າງໆຕາມລະບຽບການ ແລະ ຕົກລົງບໍ່ຈ່າຍເງິນປັນຜົນປະຈຳປີ 2021 ດ້ວຍຄະແນນສຽງ ເປັນເອກະພາບ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 158.149.080 ສຽງ, ເທົ່າກັບ 100 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 3: ຮັບຮອງແຜນການປະຈຳປີ 2022**

ທ່ານ ຄຳພຸດ ສິດທິລາດ, ຜູ້ອຳນວຍການ ທຄຕລ ໄດ້ນຳສະເໜີຕໍ່ກອງປະຊຸມ ພິຈາລະນາ ແລະ ຮັບຮອງແຜນການປະຈຳປີ 2022, ໃນນັ້ນມີແຜນສຳຄັນດັ່ງນີ້:

❖ **ແຜນທຸລະກິດ:**

- ຍອດຊັບສິນ : 72.543.000 ລ້ານກີບ, ທຽບໃສ່ການປະຕິບັດປີ 2021 ເພີ້ມຂຶ້ນ 6,31%;
- ຍອດເງິນຝາກ: 66.000.000 ລ້ານກີບ, ທຽບໃສ່ການປະຕິບັດປີ 2021 ເພີ້ມຂຶ້ນ 6,79%;
- ຍອດເງິນກູ້ທັງໝົດ: 31.737.000 ລ້ານກີບ, ທຽບໃສ່ການປະຕິບັດປີ 2021 ເພີ້ມຂຶ້ນ 5,51%;
- ໜີ້ NPL ທັງໝົດ : 1.847.000 ລ້ານກີບ ທຽບໃສ່ປະຕິບັດ 2021 ເພີ້ມຂຶ້ນ 59,05% ແລະ ກວມ 5,82% ຂອງສິນເຊື່ອທັງໝົດ;
- ກຳໄລກ່ອນອາກອນ: 59.000 ລ້ານກີບ ທຽບໃສ່ປະຕິບັດ 2021 ເພີ່ມຂຶ້ນ 368,81%.

❖ **ແຜນປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ:**

- ການກໍານົດແຜນປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ ທີ່ຄາດຄະເນຈະຈົດເຂົ້າຊັບສົມບັດ ພາຍໃນປີ 2022 ທັງໝົດ ຈໍານວນ 231,96 ຕື້ກີບ ເຊິ່ງຢູ່ໃນຂອບເຂດຂອງແຫຼ່ງທຶນທີ່ມີ ແລະ ສຸມໃສ່ສະເພາະວຽກງານທີ່ມີຄວາມຈໍາເປັນ ເພື່ອເສີມສ້າງຄວາມໝັ້ນຄົງທາງດ້ານລະບົບໃຫ້ແກ່ ທຄຕລ.

ກໍລະນີສະພາບເສດຖະກິດມີການປ່ຽນແປງ ຫຼື ມີຄວາມຈໍາເປັນໃດໆທີ່ຕ້ອງດັດແກ້ແຜນການປະຈໍາປີ 2022, ສະເໜີໃຫ້ກອງປະຊຸມມອບອໍານາດໃຫ້ສະພາບໍລິຫານ ທຄຕລ ພິຈາລະນາຮັບຮອງເອົາການດັດແກ້ແຜນການດັ່ງກ່າວ.

ຈາກນັ້ນ ປະທານກອງປະຊຸມ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄໍາຖາມຕໍ່ວາລະນີ້:

➢ **ທ່ານ Buth Ang** ຕາງໜ້າທະນາຄານແຄນນາເດຍ ລາວ ຈໍາກັດ ໄດ້ມີຄໍາເຫັນວ່າ: ທຄຕລ ຈະມີການການສ້າງຕັ້ງບໍລິສັດ ທຄຕລ ບໍລິຫານຊັບສິນຂຶ້ນ ເຊິ່ງຈະເປັນທ່າແຮງສໍາຄັນໃຫ້ ທຄຕລ, ຈຶ່ງເຫັນ ວ່າ ທຄຕລ ຄວນຈະມີກໍາໄລໃຫ້ໄດ້ຫຼາຍກວ່າແຜນທີ່ກໍານົດໄວ້ຂ້າງເທິງນີ້.

  ▪ **ທ່ານ ຄໍາພຸດ ສິດທິລາດ** ໄດ້ຊີ້ແຈງວ່າ: ຖ້າການສ້າງຕັ້ງບໍລິສັດ ທຄຕລ ບໍລິຫານຊັບສິນ ສໍາເລັດໄວ ແມ່ນຕົວເລກກໍາໄລ ທຄຕລ ອາດຈະໄດ້ຫຼາຍກວ່າທີ່ຂຶ້ນແຜນໄວ້ນີ້, ແຕ່ໃນຕົວຈິງ ຂະບວນການສ້າງຕັ້ງບໍລິສັດອາດຈະໃຊ້ເວລາສົມຄວນ, ການຂຶ້ນແຜນຂ້າງເທິງແມ່ນບົນພື້ນຖານ ບໍ່ອີງໃສ່ໃນການສ້າງຕັ້ງບໍລິສັດ ທຄຕລ ບໍລິຫານຊັບສິນ, ແຕ່ແນວໃດກໍ່ຕາມ ທຄຕລ ກໍ່ຈະພະຍາຍາມສູ້ຊົນໃນການສ້າງກໍາໄລໃຫ້ໄດ້ຫຼາຍທີ່ສຸດ.

ຫຼັງຈາກນັ້ນ ປະທານກອງປະຊຸມ ໄດ້ສະເໜີໃຫ້ລົງຄະແນນສຽງ.

ກອງປະຊຸມ ໄດ້ຮັບຮອງເອົາແຜນການປະຈໍາປີ 2022 ຕາມການສະເໜີຂ້າງເທິງ, ໃນກໍລະນີມີຄວາມຈໍາເປັນໃນການດັດແກ້ແຜນ ແມ່ນເຫັນດີມອບອໍານາດໃຫ້ສະພາບໍລິຫານ ທຄຕລ ພິຈາລະນາຮັບຮອງ, ເຊິ່ງກອງປະຊຸມໄດ້ມີມະຕິດ້ວຍຄະແນນສຽງເປັນເອກະພາບ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈໍານວນ: 158.149.080 ສຽງ, ເທົ່າກັບ 100% ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີຈໍານວນ: 0 ສຽງ, ເທົ່າກັບ 0% ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 4: ຮັບຮອງການສ້າງຕັ້ງບໍລິສັດ ທຄຕລ ບໍລິຫານຊັບສິນ**

ທ່ານ ຄໍາພຸດ ສິດທິລາດ, ຜູ້ອໍານວຍການ ທຄຕລ ໄດ້ນໍາສະເໜີຕໍ່ກອງປະຊຸມ ພິຈາລະນາ ແລະ ຮັບຮອງການສ້າງຕັ້ງ ບໍລິສັດ ທຄຕລ ບໍລິຫານຊັບສິນ ເພື່ອເປັນໂອກາດຫນຶ່ງໃນການສ້າງລາຍຮັບໃຫ້ ທຄຕລ, ເຊິ່ງຖືໄດ້ວ່າ ບໍລິສັດ ທຄຕລ ບໍລິຫານຊັບສິນ ຈະເປັນບໍລິສັດທໍາອິດໃນ ສປປ ລາວ, ເປົ້າຫມາຍໃນການດໍາເນີນທຸລະກິດແມ່ນເພື່ອບໍລິຫານຈັດການ ໜີ້/ຊັບສິນ ທີ່ຊື້ຫລຸດຈາກ ທະນາຄານ/ສະຖາບັນການເງິນ ເພື່ອນໍາມາປັບປຸງ-ພັດທະນາໃຫ້ສາມາດສ້າງລາຍຮັບຫລື ກາຍເປັນຊັບສິນທີ່ໄດ້ມາດຕະຖານ ແລະ ເປັນທີ່ຕ້ອງການຂອງຕະຫລາດຫລາຍຂຶ້ນ.

ສໍາລັບເງື່ອນໄຂລະອຽດ ສະເໜີກອງປະຊຸມຜູ້ຖືຮຸ້ນມອບອໍານາດໃຫ້ສະພາບໍລິຫານ ພິຈາລະນາຮັບຮອງບັນຫາໃດໆທີ່ຕິດພັນກັບການສ້າງຕັ້ງບໍລິສັດດັ່ງກ່າວ.

ຈາກນັ້ນ, ປະທານກອງປະຊຸມ ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄໍາຖາມຕໍ່ວາລະນີ້:

➢ **ທ່ານ Buth Ang** ຕາງໜ້າທະນາຄານແຄນນາເດຍ ລາວ ຈໍາກັດ ໄດ້ມີຄໍາຖາມວ່າ: ການສ້າງຕັ້ງບໍລິສັດ ທຄຕລ ບໍລິຫານຊັບສິນ ຈະເປັນທ່າແຮງໃຫ້ ທຄຕລ ສາມາດແກ້ໄຂບັນຫາຂໍ້ຫຍຸ້ງຍາກຕ່າງໆຈາກຜົນ

ກະທົບຂອງໂຄວິດ 19, ເຫັນດີໃຫ້ ທຄຕລ ດຳເນີນການສ້າງຕັ້ງບໍລິສັດດັ່ງກ່າວ. ແຕ່ສົນໃຈກ່ຽວກັບທຶນຈົດທະບຽນ ແລະ ແຫຼ່ງທຶນຂອງບໍລິສັດດັ່ງກ່າວ.

- **ທ່ານ ຄຳພຸດ ສິດທິລາດ** ໄດ້ໃຫ້ຂໍ້ມູນວ່າ: ຕາມແຜນການສ້າງຕັ້ງບໍລິສັດ ທຄຕລ ບໍລິຫານຊັບສິນ ແມ່ນຈະໃຊ້ທຶນຈົດທະບຽນປະມານ 18 ຕື້ກີບ, ຫຼັງຈາກສ້າງຕັ້ງ ຈະຈັດສັນພະນັກງານ ທຄຕລ ໄປບໍລິຫານ, ດ້ານແຫຼ່ງທຶນແມ່ນຈາກ ທຄຕລ ສະໜອງໃຫ້ຕາມຄວາມເໝາະສົມ.

➢ **ທ່ານ ຄຳໄຊ ບຸນມີສີດາວົງ** ມີຄຳເຫັນວ່າ: ສະແດງຄວາມຊົມເຊີຍຕໍ່ ທຄຕລ ສຳລັບແນວຄິດໃນການສ້າງຕັ້ງບໍລິສັດດັ່ງກ່າວ ເຫັນວ່າຈະເປັນໂອກາດດີ ສ້າງຄວາມສະດວກໃຫ້ ທຄຕລ, ແຕ່ໃນການສ້າງຕັ້ງບໍລິສັດດັ່ງກ່າວ ທຄຕລ ຈະເປີດໃຫ້ພາກສ່ວນອື່ນມີສ່ວນຮ່ວມນຳບໍ່?

– ນອກຈາກສ້າງບໍລິສັດ ທຄຕລ ບໍລິຫານຊັບສິນ, ເຫັນວ່າ ທຄຕລ ຍັງມີຄວາມສາມາດໃນການສ້າງກຳໄລຈາກ ຜະລິດຕະພັນຂອງ ທຄຕລ ທີ່ມີທ່າແຮງຫຼາຍ ແລະ ເປັນທີ່ຍອມຮັບຈາກສັງຄົມ ເປັນຕົ້ນແມ່ນຜະລິດຕະພັນບໍລິການແບບດີຈິຕອນ, ສະເໜີ ທຄຕລ ເອົາຈຸດແຂງຂອງຜະລິດຕະພັນດັ່ງກ່າວ ແລະ ຊຸດຂໍ້ມູນທີ່ ທຄຕລ ມີມາສ້າງລາຍຮັບໃຫ້ສູງຂຶ້ນຕື່ມ.

  - **ທ່ານ ຄຳພຸດ ສິດທິລາດ** ໄດ້ຊີ້ແຈງວ່າ: ການສ້າງຕັ້ງບໍລິສັດ ທຄຕລ ບໍລິຫານຊັບສິນ ໃນເບື້ອງຕົ້ນ ທຄຕລ ໄດ້ຄົ້ນຄວ້າ ແລະ ນຳສະເໜີສະພາບໍລິຫານ ໂດຍເລີ່ມຈາກ ທຄຕລ ຖືຮຸ້ນ 100% ກ່ອນ ພາຍຫຼັງການດຳເນີນງານມີທ່າແຮງດີຂຶ້ນ ຈຶ່ງຈະຂະຫຍາຍໃຫ້ພາກສ່ວນອື່ນມາຮ່ວມຮຸ້ນນຳ.
  - ນອກນັ້ນ ທຄຕລ ກໍ່ໄດ້ພະຍາຍາມຄົ້ນຄວ້າການສ້າງລາຍຮັບເພີ່ມຈາກຜະລິດຕະພັນຂອງ ທຄຕລ ໂດຍໄດ້ ຊຸກຍູ້, ເຊື່ອມໂຍງຜະລິດຕະພັນ BCEL One, BCEL i-Bank ກັບຫຼາຍພາກສ່ວນ ເພື່ອຂະຫຍາຍການບໍລິການ e-Commerce ແລະ ກຳລັງຄົ້ນຄວ້າການຂໍສິນເຊື່ອໃຫ້ສາມາດເຮັດໄດ້ຜ່ານແອັບພລິເຄຊັນຂອງ ທຄຕລ ຕື່ມອີກ;

ຫຼັງຈາກນັ້ນ ປະທານກອງປະຊຸມ ໄດ້ສະເໜີໃຫ້ລົງຄະແນນສຽງ.

ກອງປະຊຸມ ໄດ້ຮັບຮອງການສ້າງຕັ້ງບໍລິສັດ ທຄຕລ ບໍລິຫານຊັບສິນ ຕາມການສະເໜີຂ້າງເທິງ ແລະ ເຫັນດີມອບອຳນາດໃຫ້ສະພາບໍລິຫານ ພິຈາລະນາຮັບຮອງບັນຫາໃດໆທີ່ຕິດພັນກັບການສ້າງຕັ້ງບໍລິສັດດັ່ງກ່າວ ເຊິ່ງກອງປະຊຸມໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

– ເຫັນດີຈຳນວນ: 158.147.210 ສຽງ, ເທົ່າກັບ 99,999% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
– ບໍ່ເຫັນດີຈຳນວນ: 1.870 ສຽງ, ເທົ່າກັບ 0,001 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 5: ຮັບຮອງການແຕ່ງຕັ້ງຜູ້ກວດສອບອິດສະຫຼະປະຈຳປີ 2022.**

ທ່ານ ຄຳພຸດ ສິດທິລາດ, ຜູ້ອຳນວຍການ ທຄຕລ ໄດ້ນຳສະເໜີຕໍ່ກອງປະຊຸມ ຮັບຮອງ ເອົາບໍລິສັດພຣາຍສວໍເຕີເຮົ້າສກຸບເປີສ ລາວ ຈຳກັດຜູ້ດຽວ (PWC) ເປັນຜູ້ກວດສອບຖານະການເງິນ ທຄຕລ ປະຈຳປີ 2022, ໃນລາຄາການກວດສອບບັນຊີ ແລະ ການທົບທວນຂອບເຂດເງິນກູ້ ແມ່ນ 920.000.000 ກີບ (ເກົ້າຮ້ອຍຊາວລ້ານກີບຖ້ວນ). ການບໍລິການກວດສອບ ລວມມີການກວດສອບຕາມມາດຕະຖານບັນຊີສາກົນ ແລະ ມາດຕະຖານບັນຊີລາວ ເປັນພາສາລາວ-ພາສາອັງກິດ, ທົບທວນຖານະການເງິນປະຈຳ 6 ເດືອນ ແລະ ປະຈຳປີ.

ຈາກນັ້ນ ປະທານກອງປະຊຸມ ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້, ແຕ່ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ. ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ລົງຄະແນນສຽງ.

ກອງປະຊຸມ ໄດ້ມີມະຕິຮັບຮອງເອົາບໍລິສັດພຣາຍສວໍເຕີເຮົ້າສກຸບເປີສ ລາວ ຈໍາກັດຜູ້ດຽວ (PWC) ເປັນຜູ້ກວດສອບອິດສະຫຼະ ປະຈໍາປີ 2021 ຂອງ ທຄຕລ ດ້ວຍການລົງຄະແນນສຽງໃນກອງປະຊຸມດັ່ງນີ້:

- ເຫັນດີຈໍານວນ: **158.147.210** ສຽງ, ເທົ່າກັບ **99,999%** ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈໍານວນ: **1.870** ສຽງ, ເທົ່າກັບ 0,001 % ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ປະທານກອງປະຊຸມ ໄດ້ກ່າວສະແດງຄວາມຂອບໃຈຜູ້ຖືຮຸ້ນ ແລະ ຕາງໜ້າຜູ້ຖືຮຸ້ນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ພ້ອມທັງໄດ້ປະກາດປິດກອງປະຊຸມໃນເວລາ 15:30 ໂມງ ຂອງວັນດຽວກັນ.

**ປະທານກອງປະຊຸມ**

**ຄໍາສຸກ ສູນດາລາ**

**ຜູ້ບັນທຶກ**

ສອນນາລິນ ແສງມະນີ